## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 14 ມະກະຣາ 2024 (01-14-2024)

---

## ຄວາມເຊື່ອທີ່ປ່ຽນແປງຊີວິດ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອເລີ່ມຕົ້ນດ້ວຍການຮຽກເອີ້ນໃຫ້ຕິດຕາມພຣະເຢຊູ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າມີເລື່ອງສາຣະພາບ: ຂ້າພະເຈົ້າບໍ່ມັກການຫຼອນ (surprise). ຂ້າພະເຈົ້າຊື່ນຊົມຢ່າງເລິກເຊິ່ງເວລາສິ່ງຕ່າງໆສາມາດພະຍາກອນລ່ວງໜ້າ, ແລະງ່າຍໃນການຕັດສິນໃຈ. ແຕ່, ແນ່ນອນ, ຊີວິດເຕັມໄປດ້ວຍການຫຼອນຫຼວງຫຼາຍແລະການປ່ຽນແປງຊີວິດທີ່ສຳຄັນມັກບັງລັບຢູ່ຕາມເສັ້ນທາງເດີນ. ພຣະເຈົ້າຢາກໃຫ້ເຮົາກະໂດດໂລດເຕັ້ນບາງຄັ້ງແລະບາງຄາວ.

ໃນປີ 2012, ຂ້າພະເຈົ້າໄດ້ຊື່ນຊອບໃຈນຳການເລົ້າໂລມໃຈໃຫຍ່ຫຼວງຂອງໂບດປະຈຳຄອບຄົວ, ເພື່ອນໃກ້ຊິດ, ແລະເງິນເດືອນຈາກນ້ຳໃຈເອື້ອເຟື້ອເພື່ອແຜ່ຢ່າງຕໍ່ເນື່ອງ. ແຕ່ວ່ານັ້ນເປັນປີທີ່ຂ້າພະເຈົ້າຕ້ອງໄດ້ມີການຕັດສິນໃຈທີ່ຍາກຫຼາຍ. ທັງພໍ່ແມ່-ທີ່ຢູ່ໄກ 500 ໄມລ໌-ກໍກຳລັງຜ່ານພ່າຊ່ວງແຫ່ງຄວາມຈຳເຊື່ອມ. ຢ່າງໜ້າອັສຈັນ, ຂ້າພະເຈົ້າໄດ້ຮັບໂອກາດອັນດີຄືມີຜູ້ສເນີວຽກງານໃຫ້ ຊຶ່ງອຳນວຍໃຫ້ຂ້າພະເຈົ້າຍ້າຍໄປໄກຈາກພໍ່ແມ່ຂອງຂ້າພະເຈົ້າພຽງຫ້າໄມລ໌. ແຕ່ມັນມີຄ່າຕ້ອງຈ່າຍ. ຂ້າພະເຈົ້າຈະໄດ້ຮັບເງິນພຽງເຄິ່ງນຶ່ງຂອງເງິນເດືອນປະຈຸບັນ. ສຽງກະຊິບແລະກະພິບຕາຫຼາຍໆຄັ້ງຂອງຜູ້ມີອຳນາດສູງສຸດບໍ່ສາມາດທີ່ຈະເມີນເສີຍໄດ້.

ຂ້າພະເຈົ້າໄດ້ພົບທາງສອງແຍກດັ່ງ ໂຣເບີດ ຟຣອສຕ໌(Robert Frost) ໄດ້ຂຽນກ່ຽວກັບ, ແລະຂ້າພະເຈົ້າຮູ້ສຶກພຣະເຈົ້າຈ່ອງດຶງສູ່ເສັ້ນທາງທີ່ມີໜ້ອຍຄົນເດີນ. ຂ້າພະເຈົ້າຕ້ອງການຄວາມເຊື່ອທີ່ປ່ຽນແປງຊີວິດ. ພວກເຮົາທຸກຄົນພົບການຕັດສິນໃຈຢ່າງນີ້, ແມ່ນບໍ່? ພຣະເຈົ້າເອີ້ນເຮົາສູ່ການພະຈົນພັຍ, ຊຶ່ງບາງຄັ້ງຈຳເປັນຕ້ອງມີຄວາມເຊື່ອທີ່ເລິກເຊິ່ງ ແທນທີ່ຈະເປັນຄວາມເຊື່ອທີ່ສະດວກສະບາຍແລະລາບລື້ນດີ.

*ຫົນທາງໃດທີ່ທ່ານດີໃຈໄດ້ຫຼຽວເພາະໄດ້ເດີນທາງໜ້ອຍກວ່າ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ລູກາ 5:1-3.

*1ຢູ່ມາເມື່ອປະຊາຊົນກຳລັງບຸບຽດກັນເຂົ້າມາເພື່ອຈະໄດ້ຟັງພຣະທັມຂອງພຣະເຈົ້າ ພຣະເຢຊູ ຊົງຢືນຢູ່ແຄມທະເລສາບ ເຄັນເນຊາເຣັດ.*
*2ຊົງເຫັນເຮືອສອງລຳຈອດຢູ່ຮິມຝັ່ງທະເລສາບນັ້ນ ສ່ວນພວກຫາປາໄດ້ອອກໄປຈາກເຮືອນັ້ນແລ້ວ ເຂົາກຳລັງລ້າງມອງຢູ່. 3ພຣະອົງ*
*ໄດ້ສະເດັດເຂົ້າໄປໃນເຮືອລຳນຶ່ງ ຄືເຮືອຂອງຊີໂມນແລ້ວຊົງຂໍໃຫ້ຖອຍເຮືອອອກໄປຈາກຝັ່ງໜ້ອຍນຶ່ງ ຈຶ່ງປະທັບລົງສັ່ງສອນປະຊາຊົນ*
*ຈາກເຮືອນັ້ນ.*

ໃນໂລກຂອງທຸຣະກິດນີ້, ພວກເຮົາມັກຈະໄດ້ຍິນຄຳເວົ້າເຊັ່ນ: "ໃຫ້ແນ່ໃຈວ່າຄົນຢູ່ໃນຣົດເມນັ້ນຖືກຕ້ອງ." ສຳລັບທ່ານເປໂຕ, ມັນສຳຄັນທີ່ມີຄົນຖືກຕ້ອງຢູ່ເທິງເຮືອ. ຕອນເລີ່ມຕົ້ນຂອງເລື່ອງນີ້, ພວກເຮົາເຫັນພຣະເຢຊູ, ພຣະທັມຂອງພຣະເຈົ້າໃນເນື້ອໜັງ, ກຳລັງສອນຝູງຊົນ, ແລະເປໂຕກໍເຮັດໜ້າທີ່ຂອງຄົນຫາປາ. ແລ້ວພຣະເຢຊູໄດ້ຂໍຮ້ອງເປໂຕ. ທຳອິດກໍເບິ່ງຄືວ່າເປັນສິ່ງເລັກນ້ອຍຄື: "ເຮົາຂໍຢືມເຮືອໄດ້ບໍ່?" ສ່ວນໃຫຍ່ພຣະເຢຊູເອີ້ນເຮົາເຂົ້າສູ່ການພະຈົນພັຍຢ່າງຊ້າໆ. ພຣະອົງຊວນເຮົາໃຫ້ຍ່າງກ້າວນຶ່ງ, ແລ້ວກ້າວທີ່ສອງ, ແລ້ວກ້າວຕໍ່ໄປ. ສິ່ງສຳຄັນ, ເມື່ອເຮົາວາງແຜນຊີວິດເຮົາ, ພວກເຮົາຕ້ອງແນ່ໃຈວ່າບຸກຄົນຖືກຕ້ອງຢູ່ໃນເຮືອນັ້ນ! ພຣະເຢຊູເອີ້ນເຮົາໃຫ້ອອກຈາກຊີວິດທັມມະດາ, ວັນ-ຕໍ່-ວັນໄປສູ່ການພະຈົນພັຍ.

ທ່ານລອງວາດພາບເບິ່ງວ່າເປໂຕຈະກິນແໜງພຽງໃດ ຖ້າເພິ່ນເລືອກຕອບພຣະເຢຊູວ່າ "ດຽວນີ້ພວກເຮົາຫງຸ້ງຫຼາຍແທ້ໆ. ພວກເຮົາມີມອງຕ້ອງໄດ້ລ້າງ. ພວກເຮົາຕ້ອງຫາປາ. ພວກເຮົາຕ້ອງໄດ້ລ້ຽງປາກລ້ຽງທ້ອງ." ເປໂຕອາດພາດຈາກການພະຈົນພັຍອັນນິຣັນ. ມັນໄດ້ເລີ່ມຕົ້ນດ້ວຍຄຳຂໍຮ້ອງງ່າຍໆ: ເພື່ອອະນຸຍາດໃຫ້ພຣະເຢຊູເຂົ້າໄປໃນເຮືອຂອງເພິ່ນ. ທ່ານເປໂຕສຳນຶກໄດ້ວ່າເພິ່ນບໍ່ແມ່ນຕົວລະຄອນເອກ. ຝູງຊົນຕ້ອງການຟັງພຣະທັມພຣະເຈົ້າ. ເພິ່ນບໍ່ໄດ້ຫາຝາກົດກັ້ນແຕ່ຢ່າງໃດ. ເພິ່ນບໍ່ໄດ້ແກ້ຕົວຈັກຢ່າງ. ເປໂຕພຽງແຕ່ໃຫ້ພຣະເຢຊູຊົງໃຊ້ເຮືອ. ນີ້ບໍ່ແມ່ນຄັ້ງທຳອິດທີ່ເພິ່ນໄດ້ພົບພຣະເຢຊູ, ແຕ່ເປັນເທື່ອທຳອິດທີ່ເພິ່ນກ້າວເຂົ້າສູ່ຊີວິດທີ່ເຕັມດ້ວຍສງ່າຣາສີແລະເຕັມດ້ວຍການພະຈົນພັຍ.

ໂຣມ 10:17 ກ່າວວ່າ, "ດັ່ງນັ້ນ ຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື່ອງພຣະຄຣິດ." ເປໂຕສຳນຶກໄດ້ວ່າມີບາງສິ່ງຍິ່ງໃຫຍ່ກວ່າທີ່ຈະເກີດຂຶ້ນໃນທີ່ນີ້. ພວກເຮົາສາມາດພຽງແຕ່ວາດພາບວ່າເພິ່ນຄິດຫຍັງຂນະທີ່ເພິ່ນເຫັນພຣະເຢຊູແບ່ງປັນພຣະຄຳກັບຝູງຊົນ ຢືນຢູ່ຫົວເຮືອນ້ອຍໆຂອງເພິ່ນເວົ້າພຣະທັມໃຫ້ຄົນຟັງ.

ມັນເປັນການງ່າຍສຳລັບຂ້າພະເຈົ້າທີ່ຈະເບິ່ງຂ້າມຝູງຄົນທີ່ຂ້າພະເຈົ້າຜ່ານກາຍທີ່ຮ້ານຂາຍເຄື່ອງ, ທີ່ສນາມກິລາ, ທີ່ຫ້ອງການຈົດທະບຽນຣົດ. ມັນງ່າຍທີ່ຈະລືມວ່າແຕ່ລະຊີວິດທີ່ເຮົາຜ່ານກາຍມີຄ່າຕໍ່ພຣະເຈົ້າ. ຂ້າພະເຈົ້າພົບລົ້ມລຸກຄຸກຄານກັບຊີວິດນິຣັນຖ້າມກາງຄວາມຮີບດ່ວນ. ພຣະເຢຊູປາກົດວ່າບໍ່ມີບັນຫາທຳນອງນັ້ນ. ຊີວິດນິຣັນຕ້ອງເປັນສຸດຍອດຂອງຄວາມຄິດແລະສຸດປາຍຂອງລີ້ນ. ຊາລ໌ ສຕັດ (Charles Studd) ໄດ້ປະສົບກັບການຮຽກເອີ້ນຈາກພຣະເຢຊູແນວນັ້ນ. ໃນປີ 1860, ລາວໄດ້ເກີດມາມີສິດພິເສດ. ລາວມີຊື່ສຽງດ້ານກິລາທີ່ເຕີບໃຫຍ່ທີ່ມະຫາວິທຍາລັຍແຄມບຣິດຈ໌ (Cambridge University)ມາເປັນເວລາຫຼາຍປີ. ລາວເປັນ "ຄົນມີຊື່ສຽງໃນກຸ່ມຜູ້ຊາຍ."ທຸກຄົນອ້ອມຂ້າງລາວຮູ້ສຶກວ່າລາວເປັນຄົນດີເລີດໃນດ້ານການຄ້າແລະສັງຄົມ. ແຕ່ໃນລະຫວ່າງຄວາມຮັ່ງມີແລະກຽດສັກສີທັງໝົດນີ້, ລາວໄດ້ຍິນການເອີ້ນຂອງພຣະຄຣິດ. ກ່ຽວກັບປະສົບການການກັບໃຈຂອງລາວ, ຊາລ໌ ເວົ້າວ່າ, "ແລ້ວຂ້າພະເຈົ້າຈຶ່ງຊາບວ່າຂ້າພະເຈົ້າ 'ຕ້ອງບັງເກີດໃໝ່' ແລະພຣະຄັມພີທີ່ແຫ້ງແລ້ງຫຼາຍສຳລັບຂ້າພະເຈົ້າໃນເມື່ອກ່ອນ, ໄດ້ກາຍເປັນທຸກສິ່ງ." ລາວໄດ້ຈາກປະເທດອັງກິດແລະຖວາຍຊີວິດຂອງລາວເພື່ອການປະກາດຂ່າວປະເສີດໃນປະເທດຈີນ, ອິນເດັຽ ແລະອາຟຣິກາ. ຄົນສາມາດເວົ້າວ່າ ຊາລ໌ ສຕັດ ໄດ້ໃຫ້ໂລກຂອງພຣະເຈົ້າເຂົ້າມາໃນເຮືອຊີວິດຂອງລາວແລະນັ້ນໄດ້ເຮັດໃຫ້ເກີດຄວາມແຕກຕ່າງໄປທັງໝົດ. ຄຳເວົ້ານັ້ນເບິ່ງຄືວ່າແຫ້ງແລ້ງສຳລັບການດຳເນີນຊີວິດດ້ວຍຕົວລາວເອງ. ທ່ານອາດບໍ່ຮູ້ຊື່ລາວຊໍ້າ, ແຕ່ທ່ານອາດໄດ້ຍິນຖ້ອຍຄຳນຶ່ງທີ່ລາວຂຽນໄວ້ວ່າ: "ພຽງຊີວິດດຽວ, 'ໃນບໍ່ຊ້າກໍຈະຫາຍສາບສູນໄປ' ມີແຕ່ສິ່ງທີ່ທຳສຳເຣັດເພື່ອພຣະຄຣິດເທົ່ານັ້ນທີ່ຈະຄົງຢູ່."

ມັນງ່າຍຫຼາຍສຳລັບເຮົາທີ່ຈະຍຶດຕິດກັບມອງແລະເຮືອຂອງເຮົາ ແຕ່ພວກເຮົາຈະຂາດ "ການມະຫັສຈັນ" ແລະນັ້ນຄືຄວາມເປັນຈິງຂອງຊີວິດ, ບໍ່ແມ່ນບໍ່? ໃນຖານະເປັນຜູ້ຕິດຕາມພຣະຄຣິດ, ຂ້າພະເຈົ້າບໍ່ກັງວົນກ່ຽວກັບມູນຄ່າເງິນບຳນານ (401K) ໃນສິບປີຂ້າງໜ້າ. ຂ້າພະເຈົ້າຕ້ອງຢ່າງບາດກ້າວແລກສູ່ການພະຈົນພັຍ ຊຶ່ງຈະມີຄວາມໝາຍບາງຢ່າງໃນ 10,000 ປີຈາກວັນນີ້. ບັນຫາໃຫຍ່ທີ່ສຸດໃນໂລກແມ່ນການສູນເສັຽ. ສະນັ້ນ, ພວກເຮົາຕ້ອງຖາມຕົວເອງວ່າ, "ພຣະເຢຊູຢາກໄດ້ເຮືອລຳໃດຈາກເຮົາ?"

*ເມື່ອໃດທ່ານຈຳໄດ້ວ່າທ່ານໄດ້ຍິນພຣະຄຳຂອງພຣະເຈົ້າໃນທາງທີ່ມີຄວາມໝາຍແທ້ຈິງ?*

## 2. ລູກາ 5:4-7.

*4. ເມື່ອຊົງຢຸດສອນແລ້ວພຣະອົງຊົງກ່າວຕໍ່ຊີໂມນວ່າ, "ຈົ່ງພາຍອອກໄປບ່ອນເລິກ ແລ້ວຢ່ອນມອງຂອງພວກທ່ານລົງຈັບປາ." 5. ຊີໂມນຕອບວ່າ, "ອາຈານເອີຍ, ພວກຂ້ານ້ອຍໄດ້ຫາຈົນອິດເມື່ອຍໝົດຄືນກໍບໍ່ໄດ້ຫຍັງ ແຕ່ຂ້ານ້ອຍຈະຢ່ອນມອງລົງຕາມຄຳຂອງນາຍ." 6. ເມື່ອຢ່ອນລົງແລ້ວມອງຂອງເຂົາກໍຖືກປາຫຼາຍເຕັມທີ ຈົນມອງຂອງເຂົາພວມຂາດໄປ. 7. ເຂົາຈຶ່ງກວັກມືເອົາໝູ່ທີ່ຢູ່ເຮືອລຳອື່ນໃຫ້ມາຊ່ອຍ ເມື່ອເຂົາມາຊ່ອຍແລ້ວ ກໍໄດ້ປາເຕັມເຮືອທັງສອງລຳ ຈົນເຮືອເຂົາແຊມເກືອບຫຼົ້ມ.*

"ຂ້າພະເຈົ້າປາຖນາໃຫ້ທ່ານໄດ້ຢູ່ທີ່ນັ້ນ!" ນັ້ນຄືຄຳໂຕ້ຕອບທີ່ທ່ານເປໂຕໄດ້ກ່າວເມື່ອເພິ່ນເລົ່າເຣື່ອງໃຫ້ຄົນອື່ນຟັງຫຼາຍປີຜ່ານມາ. ສິ່ງແປກປລາດເກີດຂຶ້ນໃນເມື່ອເຮົາພຽງແຕ່ເຮັດສິ່ງທີ່ພຣະເຢຊູເອີ້ນໃຫ້ເຮົາເຮັດ. ມັນເປັນພຽງຄຳຂໍຮ້ອງງ່າຍໆເຊັ່ນ: ຈົ່ງຢ່ອນມອງລົງໄປໃນນໍ້າ. ຂ້າພະເຈົ້າມັກທ່ານລູກາບັນທຶກຄຳຕອບຂອງທ່ານເປໂຕວ່າ: *"ພວກຂ້ານ້ອຍໄດ້ຫາຈົນອິດເມື່ອຍໝົດຄືນກໍບໍ່ໄດ້ຫຍັງແຕ່*

*ຂ້ານ້ອຍຈະຍ່ອນມອງລົງຕາມຄຳຂອງນາຍ."* ຂ້າພະເຈົ້າເຂົ້າໃຈໄດ້ກັບຄຳຕອບນີ້; ຂ້າພະເຈົ້າໄດ້ຍິນພຣະເຢຊູເອີ້ນຂ້າພະເຈົ້າໃຫ້ເຮັດບາງສິ່ງບາງຢ່າງເປັນການສ່ວນຕົວທີ່ສຸດເບິ່ງຄືວ່າງ່າຍແລະກໍສັບສົນຫຼາຍ, ແລະປະຕິກິຣິຍາທຳອິດຂອງຂ້າພະເຈົ້າຄືການອະທິບາຍໃຫ້ພຣະຜູ້ສ້າງຈັກກະວານວ່າເປັນຫຍັງທິດທາງຂອງພຣະອົງເບິ່ງຄືວ່າບໍ່ເຂົ້າເຣື່ອງ. ນັ້ນແມ່ນສິ່ງລະອາຍທີ່ຈະສາຣະພາບ! ແຕ່ມັນເຮັດໄດ້ງ່າຍ. ພວກເຮົາດຳເນີນຊີວິດຫຼາຍປີແລະມີປະສົບການຫຼາຍ, ດັ່ງນັ້ນພວກເຮົາລືມໄປວ່າຜູ້ທີ່ກະຊິບບອກທິດທາງໄດ້ຢູ່ໃນນີ້ເປັນເວລາດົນນານ, ຕັ້ງແຕ່ສອນເອເດັນມາ. ພຣະອົງຊາບດີວ່າພຣະອົງກຳລັງເຮັດຫຍັງ. ທ່ານຄວນຖາມຕົວເອງວ່າ, ເປັນຫຍັງເປໂຕຈຶ່ງເຊື່ອຟັງຄວາມ? ບາງທີ ສ່ວນສຳຄັນທີ່ຍິ່ງໃຫຍ່ທີ່ສຸດຂອງຂັ້ນຕອນການຕັດສິນໃຈຂອງເພິ່ນແມ່ນຄຳເວົ້າທີ່ເພິ່ນໄດ້ຍິນຕອນພຣະເຢຊູເທສນາ. ນັ້ນຄືສິ່ງທີ່ພຣະທັມຂອງພຣະເຈົ້າກະທຳ. ມັນເຮັດໃຫ້ພວກເຮົາກ້າເຊື່ອຟັງ. ມັນເຮັດໃຫ້ພວກເຮົາກ້າເຮັດຢ່າງໄຮ້ເຫດຜົນ, ສິ່ງດີເລີດ.

ມັນເຕືອນຂ້າພະເຈົ້າເຖິງງານລ້ຽງສົມຣົດໃນໂຢຮັນ 2:5, ເວລາ ມາຣີອາ, ມານດາຂອງພຣະເຢຊູບອກຄົນໃຊ້ວ່າ: "ເມື່ອເພິ່ນບອກພວກເຈົ້າເຮັດອັນໃດ ຈົ່ງເຮັດຕາມເນີ." ນາງຮູ້ດີວ່າລູກຂອງນາງເປັນໃຜ. ນາງສາມາດອະທິບາຍເຖິງສງ່າຣາສີຂອງລູກຊາຍຂອງນາງ, ເລືອດກະສັດທີ່ໄຫຼຜ່ານສາຍເລືອດຂອງພຣະອົງ, ຖານະພຣະຜູ້ສ້າງແລະຄອບຄອງຈັກກະວານ. ນາງຢຳເກງພຣະຣັສມີຂອງພຣະເຢຊູ, ແລະນາງໄດ້ພຍາຍາມສນັບສນູນການຝຶກສອນທີ່ບໍ່ສິ້ນສຸດຂອງນາງເຖິງຄຳທຳນວາຍຈາກພຣະຄັມພີ. ກ່ຽວກັບໄມ້ກາງແຂນ. ແຕ່ແທນທີ່ຈະເຮັດດັ່ງນັ້ນ, ນາງພຽງແຕ່ຊີ້ໃສ່ພຣະເຢຊູແລະ, ດ້ວຍຄວາມຕັ້ງໃຈແລະສິດອຳນາດໃນສຽງຂອງນາງ, ກ່າວວ່າ, "ຈົ່ງເຮັດຕາມສິ່ງທີ່ເພິ່ນບອກ" (ຂໍ້ 5). ຂ້າພະເຈົ້າຄິດວ່າຂ້າພະເຈົ້າຈະຕິດຕາມຄຳແນະນຳນັ້ນ ແລະທ້າທາຍທ່ານໃຫ້ເຮັດເໝືອນກັນ.

ທ່ານເປໂຕດີໃຈທີ່ໄດ້ເຮັດສິ່ງທີ່ພຣະເຢຊູບອກໃຫ້ເຮັດ, ເຖິງແມ່ນວ່າຈະມີຂໍ້ມູນທັງໝົດແລະປະສົບການທີ່ເພິ່ນມີກ່ຽວກັບການຫາປາໝົດມື້ຈົນເມື່ອຍແຕ່ບໍ່ໄດ້ຫຍັງ. ເພິ່ນເຮັດຕາມທີ່ພຣະເຢຊູເວົ້າ ແລະສິ່ງມະຫັສຈັນໄດ້ເກີດຂຶ້ນ.

- ການຮັບໃຊ້ຄົນໄຮ້ບ້ານ? ຈົ່ງເຮັດສິ່ງທີ່ພຣະອົງບອກທ່ານເຮັດ!
- ຕິດຕາມພຣະອົງໄປຕ່າງປະເທດ? ຈົ່ງເຮັດສິ່ງທີ່ພຣະອົງບອກທ່ານເຮັດ!
- ຈົ່ງຖວາຍນຶ່ງສ່ວນສິບຂອງລາຍໄດ້ປະຈຳ? ຈົ່ງເຮັດສິ່ງທີ່ພຣະອົງບອກທ່ານເຮັດ!

ມັນເປັນຄຳແນະນຳທີ່ດີ! ມີຫຼາຍຄົນຈະເສັຽໃຈໃນບັ້ນທ້າຍຂອງຊີວິດທີ່ເຂົາບໍ່ໄດ້ເຮັດຕົງຕາມສິ່ງພຣະເຢຊູເວົ້າ, ດັ່ງທີ່ເປໂຕໄດ້ເຮັດ. ແລະບໍ່ມີຜູ້ໃດຈະເສັຽໃຈເວລາທີ່ເຂົາອ່ານຢ່າງແຈ່ມແຈ້ງໃນພຣະຄັມພີແລະໄດ້ຍິນຄຳຮຽກເອີ້ນຂອງພຣະອົງໃນການອະທິຖານແລະຕັດສິນໃຈເຊື່ອຟັງໂດຍງ່າຍ. ພຣະເຢຊູເອີ້ນເຮົາສູ່ຊີວິດອັນຕະລາຍ, ສ່ຽງພັຍ, ແລະບໍ່ກິນແໜງ. ແຕ່ມັນເປັນການຕັດສິນໃຈທີ່ພວກເຮົາຕ້ອງເຮັດເພື່ອເຮົາເອງ. ພວກເຮົາອາດຈະພົບວ່າຕົວເອງຈົມຢູ່ໃນການອັສຈັນຫຼາຍຈົນຕ້ອງເຮັດວຽກລ່ວງເວລາເພື່ອຝູງມອງຂອງເຮົາ. ແຕ່ເຣື່ອງໃດທີ່ເຮົາຈະໃຫ້ການຂນະທີ່ເຮົາຕຽມສຳລັບວັນທີ່ຈະມາ!

*ເມື່ອໃດທ່ານໄດ້ເຫັນການກະທຳດ້ວຍການເຊື່ອຟັງງ່າຍໆທີ່ພາໃຫ້ເກີດຜົນຝ່າຍວິນຍານ?*

## 3. ລູກາ 5:8-11.

*8. ເມື່ອຊີໂມນເປໂຕໄດ້ເຫັນດັ່ງນັ້ນກໍຂາບລົງທີ່ພຣະຊານຸ(ຫົວເຂົ່າ)ຂອງພຣະເຢຊູທູນວ່າ, "ນາຍເອີຍ, ຂໍເຊີນໄປໃຫ້ຫ່າງຈາກຂ້ານ້ອຍທ້ອນເພາະຂ້ານ້ອຍເປັນຄົນບາບ." 9. ເພາະເປໂຕກັບໝູ່ທັງໝົດທີ່ຢູ່ນຳກັນນັ້ນ ໄດ້ງຶດປລາດໃຈດ້ວຍປາຫຼາຍທີ່ເຂົາຈັບໄດ້ນັ້ນ. 10. ຢາໂກໂບແລະໂຢຮັນລູກຊາຍຂອງເຊເບດາຍ ທີ່ເປັນໝູ່ຮ່ວມງານກັບຊີໂມນກໍປລາດໃຈເໝືອນກັນ ພຣະເຢຊູຊົງກ່າວແກ່ຊີໂມນວ່າ, "ຢ່າຊູ່ຢ້ານ ຕັ້ງແຕ່ນີ້ໄປທ່ານຈະເປັນຜູ້ຫາຄົນ." 11. ເມື່ອໄດ້ນຳເຮືອມາເຖິງຝັ່ງແລ້ວ ເຂົາກໍສລະສິ່ງສາຣະພັດແລ້ວຕາມພຣະອົງໄປ.*

ການຕອບຂອງທ່ານເປໂຕເຮັດໃຫ້ເຮົາຕົກໃຈ. ຍ້ອນທຸກສິ່ງທີ່ເພິ່ນໄດ້ເຫັນໃນວັນບ້າບໍ່, ທີ່ອັສຈັນນັ້ນ, ເພິ່ນກົ້ມຂາບທີ່ເຂົ່າພຣະເຢຊູແລະປະກາດຄວາມລະອາຍໃຈຂອງເພິ່ນ. ຈະບໍ່ມີການຮ້ອງໂຮແລະຕົບມືສູງກັນ. ໃນຂນະຜົນຕາມມາຢ່າງໜ້າອັສຈັນນັ້ນ, ເພິ່ນສາມາດຄິດພຽງແຕ່ວ່າເພິ່ນເປັນຄົນບາບຫຼາຍພຽງໃດ. ທຳອິດມັນເຮັດໃຫ້ເຮົາຕົກໃຈ, ແລະຫຼັງຈາກນັ້ນເຮົາຈຳໄດ້ວ່າເຮົາເປັນຄົນໄຮ້ຄ່າພຽງໃດໃນຄວາມຊອບທັມຂອງເຮົາເອງເພື່ອຈະໄດ້ພົບພຣະຄຸນ. ມັນຖ້ວມລົ້ນ! ມັນຕື່ນຕົກໃຈ! ພວກເຮົາຜ່ານໄລຍະເວລາຂອງຊີວິດເຮົາແລ້ວເບິ່ງໄປທີ່ໄມ້ກາງແຂນ, ແລະພວກເຮົາຈະປລາດໃຈວ່າເປັນຫຍັງເຮົາຈຶ່ງເຮັດຢ່າງນີ້.

ແລະເປັນຫຍັງພຣະເຈົ້າອົງຊົງຣິດທານຸພາບສູງສຸດຈຶ່ງຖ່ອມລົງຕ່ຳເພື່ອໃຫ້ຊີວິດຂອງພຣະອົງຄົບກັບຊີວິດເຮົາ. ບາງທີ ພວກເຮົາອາດບໍ່ເຂົ້າໃຈຄວາມລຶກລັບນີ້, ແຕ່ ມັນຈະບໍ່ຂັດຂວາງເຮົາຈາກການສເລີມສລອງມັນ. ມັນຈະບໍ່ຂັດຂວາງເຮົາຈາກການປາກົດ ໃນພຣະຄຸນຂອງພຣະເຢຊູຄຣິດແລະ ຂອງຂວັນຊີວິດອັນຕລອດໄປເປັນນິດ. ແລະ ຖ້າມັນເປັນຈິງ, ເປັນຫຍັງພວກເຮົາຈຶ່ງບໍ່ມີຄ່າສົມຄວນປີ້ນຊີວິດເຮົາລົງທາງປີ້ນ?

*ເຮົາສາມາດຮຽນຮູ້ຫຍັງຈາກທ່າທີແລະອຸປນິສັຍຂອງຊີໂມນໃນບົດນີ້?*

ພຣະເຢຊູມີວິທີການເອີ້ນເຮົາອອກໄປຈາກບ່ອນທັມມະດາແລະຍ້າຍເຮົາໄປບ່ອນຕ່າງເກົ່າຢ່າງສິ້ນເຊີງ. ແຕ່ຄົນຫລວງຫລາຍຜູ້ໄດ້ດຳເນີນຊີວິດ, ໄດ້ເຮັດວຽກງານ, ແລະໄດ້ພັທນາຊີວິດສຳລັບຕົວເຂົາເອງມີຄວາມຍາກລຳບາກໃນການຈອດເຮືອ. ມີການລົງທຶນຫລວງຫລາຍ. ມັນສວາຍເກີນໄປທີ່ຈະປ່ຽນມ້າຖ້າມກາງການແຂ່ງຂັນ. ມັນສຳຄັນເມື່ອທ່ານສຳນຶກໄດ້ວ່າທ່ານມີພຽງຊີວິດດຽວເທົ່ານັ້ນ. ທ່ານມີໂອກາດຄັ້ງດຽວທີ່ນີ້. ຄຳຖາມທີ່ເຮົາຕ້ອງຖາມຕົວເອງ, ຜູ້ທີ່ພຣະເຈົ້າຖາມເຮົາ, ຍິ່ງໃຫຍ່ກວ່ານີ້ຫລາຍ: ພວກເຮົາຢາກສືບຕໍ່ໃນຊີວິດທັມມະດາ, ສະດວກສະບາຍຫລືພວກເຮົາຢາກປ່ຽນຊີວິດນິຣັນດອນບໍ່?” ມີທາງເລືອກຫລາຍເສັ້ນໃນການຕັດສິນໃຈນີ້. ບໍ່ພຽງສຳລັບທ່ານເທົ່ານັ້ນ, ສຳລັບຄົນຫຼຸ້ນຕ່າງໆທີ່ທ່ານມີຜົນກະທົບຕໍ່ເຂົາ. ມັນເປັນການງ່າຍທີ່ຈະໄຫລໄປຕາມກະແສ ແລະລອຍສູ່ບຳນານກັບແຜນທີ່ທ່ານວາງໄວ້ມານານຫລາຍທົດສະວັດ. ແຕ່ບໍ່ມີທາງທີ່ທ່ານສາມາດວັດແທກຄວາມຕື່ນເຕັ້ນຂອງຄວາມສຳເຣັດທີ່ເຂັ້ມແຂງໃນນ້ຳພຣະທັຍອະທິປະໄຕຂອງອົງພຣະຜູ້ເປັນເຈົ້າ. ນີ້ແມ່ນເນື້ອແທ້ຄວາມເຊື່ອເລິກເຊິ່ງ. ຄວາມເຊື່ອເລິກເຊິ່ງຮຽກຮ້ອງເຮົາເຂົ້າສູ່ການພະຈົນພັຍແລະການຫຸ້ມເທເວລາ, ພອນສວັນ, ແລະຊັບສົມບັດ. ແມ່ນຄວາມເຊື່ອເລິກເຊິ່ງທີ່ພາເຮົາຈອດເຮືອແລະຕາມໄປ, ຖາມພຣະຜູ້ໂຜດຂອງເຮົາວ່າ, “ແມ່ນຫຍັງຕໍ່ໄປ?”

*ມີທາງໃດແດ່ທີ່ກຸ່ມຂອງພວກເຮົາໜູນໃຈກັນແລະກັນສູ່ຄວາມເຊື່ອທີ່ປ່ຽນແປງຊີວິດ?*

## ນຳໃຊ້ໃນຊີວິດ

ຄວາມເຊື່ອເລີ່ມຕົ້ນຈາກການເອີ້ນໃຫ້ຕາມພຣະເຢຊູ. ຈົ່ງເລືອກການນຳໃຊ້ຢ່າງໃດຢ່າງນຶ່ງຕໍ່ລົງໄປນີ້:

- **ຈົ່ງກວດກາ.** ຈົ່ງກວດກາຫົວໃຈຂອງທ່ານ. ທ່ານປະສົງຕາມພຣະເຢຊູໄປບ່ອນທີ່ພຣະອົງພາໄປ.
- **ຈົ່ງຢ່ອນມອງ.** ພວກເຮົາທຸກຄົນມີກິຈກັມທີ່ບໍ່ຈຳເປັນ, ໃຊ້ບໍ່ໄດ້ ແລະກິຈກັມທີ່ຕ້ອງຕິດຕາມ. ອາທິດນີ້, ຈົ່ງປະຖິ້ມບາງອັນເພື່ອເປັນຫ້ອງຫວ່າງສຳລັບການຮຽກເອີ້ນຂອງພຣະເຈົ້າ.
- **ຈົ່ງເວົ້າ.** ຈົ່ງເລົ່າເຣື່ອງຄວາມລອດພົ້ນຂອງທ່ານໃຫ້ບາງຄົນທີ່ບໍ່ແມ່ນສິດຂອງພຣະຄຣິດຟັງ.

ຄຳສຸພາສິດບູຮານເປັນຈິງ, “ບ່ອນພຣະເຈົ້ານຳພາ, ພຣະອົງຈັດຫາໃຫ້.” ຄວາມເຊື່ອເລິກເຊິ່ງແມ່ນການຟັງແລະຕອບການຮຽກເອີ້ນຂອງພຣະເຈົ້າ. ພວກເຮົາສາມາດວາງໃຈວ່າ ພຣະອົງຈະໃຫ້ກຽດການຟັງຄວາມຂອງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**